# ເພ້ຍໄຟ

## 1. ລັກສະນະທົ່ວໄປ

ເພ້ຍໄຟແມ່ນແມງໄມ້ຂະໜາດນ້ອຍ ຊຶ່ງເຮົາບໍ່ສາມາດເຫັນຮູບຮ່າງໄດ້ ດ້ວຍຕາເປົ່າຢ່າງຊັດເຈນ ຖ້າບໍ່ໃຊ້ກ້ອງຂະຫຍາຍເບິ່ງໂຕແກ່ ຈະເປັນສີດຳນ້ອຍໆ. ຂະໜາດລຳໂຕ 1 ມິນລິແມັດ. ແຕ່ໂຕອ່ອນມີລັກສະນະເປັນສີຂາວໆ ການຈະເລີນເຕີບໂຕແມ່ນການລອກຄາບ.



ຮູບ: ເພ້ຍໄຟ

## 2. ໄລຍະລະບາດ

ເພ້ຍໄຟຈະລະບາດໃນນາເຂົ້າ ແຕ່ໄລຍະກ້າຫາເຂົ້າປັກດຳໃໝ່ ຖ້າ ສະພາບດິນຟ້າອາກາດແຫ້ງແລ້ງ ຝົນບໍ່ຕົກ ຫຼືຕົກໜ້ອຍແລ້ວກໍ່ເຊົາຫາຍໄປດົນໆຈຶ່ງຕົກອີກເທື່ອໜຶ່ງເຮັດໃຫ້ນາຂາດນ້ຳ ຖ້າສະພາບເຊັ່ນນີ້ ແມ່ນ ເໝາະສົມແກ່ການຂະຫຍາຍພັນ, ການປະສົມພັນ ແລະ ການລະບາດຂອງເພ້ຍໄຟ ໄປໄດ້ຢ່າງວ່ອງໄວທີ່ສຸດ .



## 3. ລັກສະນະການທຳລາຍ

ເພ້ຍໄຟໂຕແກ່ ແລະ ໂຕອ່ອນ ຈະດູດກິນນ້ຳລ້ຽງຈາກໃບ ແລະ ລຳຕົ້ນຂອງເຂົ້າເປັນອາຫານ ເຮົາສັງເກດເຫັນໄດ້ ຈາກຕົ້ນທີ່ຖືກທຳລາຍຈາກເພ້ຍໄຟ ທີ່ປາຍໃບເຂົ້າຈະມີລັກສະນະເປັນສີເຫຼືອງແຮ່ວ ຖ້າມີການທຳລາຍຮ້າຍແຮງຈະເຮັດໃຫ້ຕົ້ນເຂົ້າຕາຍໄປໃນທີ່ສຸດ

ວິທີການຊອກຫາໂຕເພ້ຍໄຟ ໃນຕົ້ນເຂົ້າແມ່ນເອົາຝາມືຈຸ່ມນ້ຳ ແລ້ວລູບໄປຕາມໃບເຂົ້າ ແລ້ວຈຶ່ງເອົາມືມາເບິ່ງຖ້າມີເພ້ຍໄຟ ເຮົາຈະສັງເກດເຫັນເພ້ຍໄຟໂຕ່ຢູ່ຕາມຝາມື .

ໃນຂະນະທີ່ມີເພ້ຍໄຟລະບາດຢູ່ນັ້ນ ຖ້າບັງເອີນມີຝົນຕົກຢ່າງໜັກຕິດຕໍ່ກັນ 3 — 4 ມື້ ເຮົາບໍ່ຈຳເປັນຕ້ອງໄດ້ສີດຢາ ຫຼື ບໍ່ຈຳເປັນຈະຕ້ອງປາບໂຕເພ້ຍກໍ່ຈະຕາຍໄປເອງ .

## 4. ການປ້ອງກັນ ແລະ ກຳຈັດ

- ຢ່າປ່ອຍປະໜານກ້າ ຫຼື ພື້ນທີ່ນາຂາດນ້ຳ, ຖ້າການລະບາດບໍ່ຮ້າຍແຮງ

ຫາກນາມີລະບົບນ້ຳຊົນລະປະທານຄວນປ່ອຍນ້ຳເຂົ້າຖ້ວມປາຍກ້າ ປະໄວ້ປະມານ 12 ຊົ່ວໂມງ, ແລ້ວເປີ່ງນ້ຳອອກ ທັງນີ້ເພື່ອທຳລາຍໄຂ່ ແລະ ໂຕເພ້ຍ .

- ໃຊ້ຢາ ອາໂຊດຣິນ 65 % ຊະນິດນ້ຳ ໃນອັດຕາ 3 — 4 ບ່ວງແກງປະສົມກັບນ້ຳ 20 ລິດ ຫຼື ໃຊ້ຢາເຊວິນ 85 % ຊະນິດຝຸ່ນ ໃນອັດຕາ 3 — 4 ບ່ວງແກງ ປະສົມກັບນ້ຳ 20 ລິດ ສີດໃຫ້ທົ່ວບໍລິເວນຖືກທຳລາຍ .

**Laos Extension for Agriculture Project**
**P.O. Box 9159**
**Vientiane, Lao P.D.R.**

ກະຊວງກະສິກຳ ແລະ ປ່າໄມ້
ກອງສົ່ງເສີມກະສິກຳ ແລະ ປ່າໄມ້ ແຫ່ງຊາດ
ພະແນກສົ່ງເສີມ ແລະ ຄຸ້ມຄອງໂຄງການ

# ການປ້ອງກັນ ແລະ ກຳຈັດແມງໄມ້ສັດຕູພືດຕົ້ນຕໍຂອງເຂົ້າ

# ( ເພ້ຍໄຟ )



ຈັດຕັ້ງປະຕິບັດໂດຍ *CETDU*
(ໜ່ວຍງານຝຶກອົບຮົມສົ່ງເສີມ ຂັ້ນສູນກາງ)

ຮ່ວມກັບ:

ໂຄງການ ສົ່ງເສີມ ກະສິກຳ (*LEAP*)